610
15/11/18

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

1596 ----
ເລກທີ /ກທຄວ.ອຄ

ນະຄອນຫຼວງວຽງຈັນ, ວັນທີ 15 ພະຈິກ 2018

ເຖິງ: - ເຈົ້າໜ້າທີ່ທະບຽນວິສາຫະກິດ, ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ
- ເຈົ້າໜ້າທີ່ທະບຽນວິສາຫະກິດ, ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ

ເລື່ອງ: ລົບລ້າງການນຳໃຊ້ແບບຟອມໃບຢັ້ງຢືນທີ່ຕັ້ງສຳນັກງານ ຫລື ສາຂາຂອງວິສາຫະກິດ ແລະ ການແຈ້ງຂຶ້ນທະບຽນວິສາຫະກິດ ໃນກິດຈະການບໍລິການ ຂອງຂະແໜງການທະນາຄານ

- ອີງຕາມ ເນື້ອໃນ ຈິດໃຈຂອງຄຳສັ່ງ, ສະບັບເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018; ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ;

- ອີງຕາມ ໜັງສືຂອງຫ້ອງການທະນາຄານ, ສະບັບເລກທີ 793/ຫທ, ລົງວັນທີ 5 ພະຈິກ 2018.

ເພື່ອລຸດຜ່ອນ ຈຳນວນເອກະສານທີ່ບໍ່ຈຳເປັນ ໃນສຳນວນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ແລະ ເພື່ອປ້ອງກັນຊ່ອງຫວ່າງ ທີ່ອາດເກີດຈາກຄວາມສັບສົນໃນການນຳໃຊ້ຄຳສັບ ຫລື ຊື່ກິດຈະການ ທີ່ຕິດພັນກັບການໃຫ້ບໍລິການໃນຂະແໜງການທະນາຄານ, ກົມທະບຽນ ແລະຄຸ້ມຄອງວິສາຫະກິດ (ກະຊວງອຸດສາຫະກຳ ແລະ ການຄ້າ) , ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ລົບລ້າງ ການນຳໃຊ້ຮ່າງແບບຟອມໃບຢັ້ງຢືນທີ່ຕັ້ງສຳນັກງານ ຫລື ສາຂາຂອງວິສາຫະກິດ ອອກຈາກຂັ້ນຕອນການແຈ້ງຂຶ້ນທະບຽນວິສາຫະກິດ. ຫ້າມຮຽກຮ້ອງເອກະສານດັ່ງກ່າວ ຈາກຜູ້ລົງທຶນອີກ.

ໃຫ້ເພີ່ມທະວີຽກງານຄຸ້ມຄອງ ຕິດຕາມ ກວດກາກ່ຽວກັບທີ່ຕັ້ງສຳນັກງານ ພາຍຫລັງໄດ້ຂຶ້ນທະບຽນວິສາຫະກິດ ໃຫ້ແກ່ຜູ້ລົງທຶນແລ້ວ;

2. ທຸກກິດຈະການ ທີ່ບົ່ງໄວ້ໃນບັນຊີ (ຄັດຕິດມາພ້ອມນີ້) ລວມທັງກິດຈະການທີ່ມີລັກສະນະຄຸມເຄືອຄ້າຍຄື ຫລື ສົງໃສວ່າ ອາດເປັນກິດຈະການທີ່ຕິດພັນກັບການໃຫ້ບໍລິການໃນຂະແໜງການທະນາຄານ ແມ່ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງພະແນກ ຫລື ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນທ້ອງຖິ່ນ ແນະນຳຜູ້ລົງທຶນໃຫ້ມາຍື່ນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ນຳກົມທະບຽນ ແລະຄຸ້ມຄອງວິສາຫະກິດ ເພື່ອປະສານກັບພາກສ່ວນທີ່ກ່ຽວຂ້ອງ ຂອງທະນາຄານ ແຫ່ງ ສປປ ລາວ ໃນການພິຈາລະນາອະນຸຍາດ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ຫົວໜ້າກົມ

ດຣ.ສົມພອງ ພຽນພິມິດ

Scanned with CamScanner